Treatment for Latent TB Infection

Laotian

ໃບຂ່າວຈາກ ກະຊວງສາທາຣະນະສຸຂ ຣັຖມິນນີໂຊຕາ Minnesota Department of Health

# ການປິ່ນປົວເນື່ອງຈາກການຕິດ ໂຣຄ໌ປອດເຫ້ງ

ຜົນຂອງການກວດພົບເຫັນວ່າ ທ່ານໄດ້ຕິດເຊື້ອ ໂຣຄ໌ປອດເຫ້ງ ຫຼື "LTBI." ເຊື້ອ ໂຣຄ໌ປອດເຫ້ງສ່ວນນ້ອຍໄດ້ແຜ່ຂຍາຍໄປສູ່ພາກສ່ວນຕ່າງໆໃນຮ່າງກາຍຂອງທ່ານແລ້ວ, ເຊັ່ນປອດ, ກະດູກ, ຫຼື ໝາກໄຂ່ຫຼັງ.

ໃນເວລານີ້, ເຊື້ອ ໂຣກປອດເຫ້ງຈະບໍ່ກໍ່ບັນຫາໃດໆໃຫ້ທ່ານເທື່ອ. ມັນຍັງ "ບົ່ມຕົວ" ແຕ່ວ່າມັນຍັງມີຊີວິດຢູ່. ເຊື້ອ ໂຣຄປອດເຫ້ງຈະ"ບົ່ມຕົວ" ຢູ່ໃນ ເມື່ອຮ່າງກາຍຂອງທ່ານຫາກຍັງສາມາດຕໍ່ສູ້ກັບມັນໄດ້ຢູ່. ໃນເມື່ອທ່ານຕິດເຊື້ອ ໂຣກປອດເຫ້ງ LTBI ມັນຈະບໍ່ສາມາດທີ່ຈະແຜ່ເຊື້ອ ໂຣຄລະບາດຕໍ່ໄປໃສ່ຜູ້ອື່ນໄດ້.

ຖ້າຮ່າງກາຍຂອງທ່ານບໍ່ສາມາດທີ່ຈະຕ້ານທານຕໍ່ ໂຣຄປອດເຫ້ງໄດ້ ມັນຈະ "ຕື່ນຂຶ້ນ" ຂຫຍາຍຕົວ. **ເພາະສັ້ນມັນຈຶ່ງສາມາດທີ່ຈະເກີດຂຶ້ນໄດ້ກັບທຸກຄົນທີ່ມີເຊື້ອ ໂຣຄປອດເຫ້ງ LTBI ໄດ້ທຸກເວລາ.** ໃນເມື່ອພຍາດຂຍາຍຕົວຂຶ້ນແລະສາມາດແຜ່ລະບາດໄດ້ ໂດຍຈະເອີ້ນວ່າ "ການແຜ່ລະບາດຂອງເຊື້ອ ໂຣກປອດເຫ້ງ" ບຸກຄົນທີ່ມີເຊື້ອ ໂຣກປອດເຫ້ງທີ່ຢູ່ໃນຂັ້ນຮ້າຍແຮງນັ້ນ ຈະປ່ວຍໜັກແລະສາມາດແຜ່ລະບາດ ເຊື້ອ ໂຣກໄປສູ່ຜູ້ອື່ນໄດ້.

## ຂ້າພະເຈົ້າຈະປ້ອງກັນ ການເມື່ອ ໂຣກປອດເຫ້ງທີ່ແຜ່ລະບາດນີ້ໄດ້ຢ່າງໃດ?




ມີຢາທີ່ຈະປ້ອງກັນໄດ້ ເພື່ອປ້ອງກັນບໍ່ໃຫ້ເຊື້ອ ໂຣຄຂຍາຍຕົວ. ຢາ Isoniazid (INH) ແມ່ນຢາທີ່ໃຊ້ປິ່ນປົວ ໂດຍທົ່ວໄປສໍາຣັບ ໂຣຄ LTBI. ຢາ INH ຈະຂ້າເຊື້ອ ໂຣຄປອດເຫ້ງທີ່ "ບົ່ມຕົວ" ຢູ່ນັ້ນ**ກ່ອນ**ທີ່ມັນຈະມີໂອກາດທໍາໃຫ້ທ່ານປ່ວຍ, ເພາະວ່າເຊື້ອ ໂຣຄປອດເຫ້ງນັ້ນມັນຮ້າຍແຮງ ຈະຕ້ອງໄດ້ໃຊ້ເວລາຫຼາຍເດືອນກ່ອນທີ່ຢານັ້ນຈະຂ້າມັນໄດ້.

ຢາ INH ທໍາງານໄດ້ດີຖ້າທ່ານກິນມັນທຸກໆມື້ຈົນກວ່າທ່ານໝໍຈະບອກໃຫ້ຢຸດ. ກິນຢານີ້ ໂດຍບໍ່ໃຫ້ກິນຮ່ວມກັບອາຫານ.

ທ່ານຕ້ອງໄປຫາທ່ານໝໍຂອງທ່ານເດືອນລະເທື່ອໃນຂນະທີ່ທ່ານກິນຢາ INH ເພື່ອຈະໄດ້ໝັ້ນໃຈວ່າການປິ່ນປົວນັ້ນໄດ້ຜົນດີ.

## ເປັນຫຍັງຂ້າພະເຈົ້າຈຶ່ງຕ້ອງການຢາ ຖ້າວ່າຂ້າພະເຈົ້າບໍ່ຮູ້ສຶກປ່ວຍ?

ຢາ INH ຂ້າເຊື້ອ ໂຣກປອດເຫ້ງໃນຮ່າງກາຍຂອງທ່ານ**ກ່ອນ**ທີ່ມັນຈະມີໂອກາດ "ກໍາເລີບຂຶ້ນ" ແລະທໍາໃຫ້ທ່ານປ່ວຍ. ໃຫ້ຈໍາໄວ້ວ່າ, ເຊື້ອ ໂຣກປອດເຫ້ງນັ້ນສາມາດຂ້າໄດ້ໃນຂນະທີ່ມັນຍັງ "ບົ່ມຕົວຢູ່."

## ຂ້າພະເຈົ້າຈະຮູ້ຢາປິ່ນປົວ ໂຣຄປອດເຫ້ງ LTBI ໄດ້ຢ່າງໃດ?

ຫຼາຍຄົນໃຊ້ຢາ INH ທຸກໆວັນ ໂດຍທີ່ບໍ່ມີບັນຫາໃດໆ, **ແຕ່ກໍມີສິ່ງເລັກນ້ອຍທີ່ທ່ານຕ້ອງໄດ້ສັງເກດເບິ່ງນໍາເຊັ່ນ:**

- ເປັນໄຂ້ຫຼາຍກວ່າສາມວັນ
- ຮັບປະທານອາຫານບໍ່ໄດ້ດີ, ຈ່ອຍລົງ,ຫຼືຮູ້ສຶກເມື່ອຍ ໂດຍບໍ່ມີສາເຫດ
- ວິ່ງວຽນຫຼືຮາກ:

    ບາງຄົນກໍວິ່ງວຽນປານກາງໃນເມື່ອ**ເລີ່ມ**ໃຊ້ຢາ INH ຖ້າມີການເຊັ່ນນີ້ເກີດຂຶ້ນກັບ, ໃຫ້ກິນອາຫານຮ່ວມນໍາ **ເລັກນ້ອຍ** ໃນເວລາທ່ານກິນຢານີ້ ຫຼືໃນເວລາກ່ອນນອນ. **ຖ້າທ່ານຍັງອາການ ເຊັ່ນນັ້ນຢູ່ ຫຼັງຈາກສາມວັນຜ່ານໄປແລ້ວໃຫ້ ໂທຣຫາຄລີນີກທ່ານ ດ່ວນ.**
- ເຈັບທີ່ທ້ອງນ້ອຍ
- ນໍ້າປັດສະວະສີຂຸ້ນ (ສີກາເຟຫຼືສີນໍ້າຊາ)
- ຜິວຫຼືຕາເຫຼືອງ
- ອອກຕຸ່ມຫຼືລັ່ນຕາມຜິວໜັງ
- ຮູ້ສຶກມືນຫຼືກະດຽມຕາມມືແລະຕີນ
- ໄອດົນຫຼາຍກວ່າສາມອາທິດ
- ເຫື່ອອອກຕອນກາງຄືນ

**ຖ້າຫາກທ່ານມີບັນຫາເຫຼົ່ານີ້, ໂທຣສັບໄປທີ່ຄລີນິກຂອງທ່ານທັນທີ ບໍ່ໃຫ້ລໍຖ້າຈົນກວ່າຈະເຖິງວັນກໍານົດໄປພົບທ່ານໝໍ.**

**ຂໍ້ສໍາຄັນອື່ນໆ:**

- **ການດື່ມເຫຼົ້າ** ໃນຂນະທີ່ໃຊ້ຢາ INH ຈະທໍາລາຍຕັບຂອງທ່ານ, ບໍ່ໃຫ້ດື່ມເບັຍ, ວາຍ, ຫຼືເຫຼົ້າຈົນກະທັ້ງທ່ານປິ່ນປົວ ໂຣກນີ້ແລ້ວ.
- ແນ່ໃຈວ່າໃຫ້ບອກທ່ານໝໍຂອງທ່ານ ຖ້າວ່າທ່ານຫາກໃຊ້**ຢາຊະນິດອື່ນໆອີກ** ຫຼືວ່າທ່ານ**ຖືພາ**.

# ການປິ່ນປົວເນື່ອງຈາກການຕິດໂຣຄປອດເຕົ້າງ - ໜ້າ 2

## ຖ້າຂ້າພະເຈົ້າບໍ່ຢາກໃຊ້ຢາ ຈະເປັນຢ່າງໃດ?

*ຖ້າທ່ານບໍ່ກິນຢານັ້ນ ຫຼືຖ້າທ່ານຢຸດໃຊ້ຢານັ້ນໄວກວ່າກຳນົດ, ທ່ານອາດຈະກັບມາເກີດປ່ວຍແລະແຜ່ຂຍາຍເຊື້ອ ໂຣຄນັ້ນ. ນີ້ມັນ ເກີດຂື້ນກັບທຸກຄົນ ທີ່ມີເຊື້ອ ໂຣກປອດເຕົ້າງ* LTBI *ທີ່ຈະແຜ່ລະບາດ ໄດ້ທຸກເວລາ. ຢາປ່ອຍໃຫ້ເຫດການເຊັ່ນນີ້ເກີດຂື້ນກັບທ່ານແລະຄອບຄົວທ່ານ.!*

## ຖ້າຂ້ອຍໄດ້ສັກຢາວັນຊິນ BCG ຂ້ອຍຍັງຈະໄດ້ເຮັດຫຍັງອີກ?

*ໃນປະເທດບ່ອນທີ່ມີເຊື້ອ ໂຣກປອດເຕົ້າງຫຼາຍ, ຄົນສ່ວນຫຼາຍຈະສັກຢາວັນຊິນ ທີ່ເອີ້ນວ່າ*BCG. *ຢາ* BCG *ສາມາດປ້ອງກັນເດັກນ້ອຍຈາກການຕິດເຊື້ອ ໂຣກປອດເຕົ້າງ, ແຕ່ກໍພຽງກຸ້ມໄປໄດ້ສອງສາມປີເທົ່ານັ້ນ.*

*ບຸກຄົນທີ່ສັກຢາ*BCG *ສາມາດຕິດເຊື້ອ ໂຣກປອດເຕົ້າງແລະແຜ່ລະບາດໄດ້!* *ຖ້າທ່ານມີເຊື້ອຢາ* BCG, *ທ່ານຍັງສາມາດທີ່ຈະປ້ອງກັນຕົວເອງ ໂດຍການໃຊ້ຢາເພື່ອກັນ ໂຣກປອດເຕົ້າງ* LTBI *ໄດ້.*

## ຖ້າຫາກວ່າຂ້ອຍບໍ່ມີເງິນທີ່ຈະຊື້ຢານີ້ເດ?

*ຖາມນຳທ່ານໝໍຫຼືນາງພຍາບານ ເພື່ອຈະຂໍເອົາຢາເຫຼົ່ານີ້ໄດ້ຈາກທາງກະຊວງສາທາຣະນະສຸກ ຣັຖມິນນີ ໂຊຕາ.*

## ຖ້າຂ້ອຍຍົກຍ້າຍໄປຢູ່ບ່ອນອື່ນເດ?

*ຖ້າທ່ານຍ້າຍໄປຢູ່ຣັຖຫຼືເມືອງອື່ນ, ບອກທ່ານໝໍກ່ອນທີ່ຈະຍ້າຍ. ເພີ່ນຈະຊ່ວຍທ່ານເພື່ອໃຫ້ເອົາໃຈໃສ່ເບິ່ງໃນເຣື່ອງການໃຊ້* ຢານັ້ນຫຼັງຈາກ *ທ່ານຍ້າຍໄປ.*

## ຂ້າພະເຈົ້າເຮັດຢ່າງໃດຈຶ່ງຈະບໍ່ລືມກິນຢາປິ່ນປົວ ໂຣຄປອດເຕົ້າງນີ້?

**ມັນເປັນສິ່ງສຳຄັນທີ່ທ່ານຄວນຈະກິນຢາ INH ທຸກວັນ.** *ຖ້າທ່ານລືມກິນຢາຫຼາຍວັນ, ຢານັ້ນອາດຈະບໍ່ທຳງານດີ. ພຍາຍາມກິນຕໍ່ໄປຈົນກວ່າທ່ານໝໍບອກໃຫ້ຢຸດ.*

*ບາງວິທີອາດຈະຊ່ວຍບໍ່ໃຫ້ລື່ມກິນຢາ:*

- *ເກັບຢາໄວ້ບ່ອນທີ່ທ່ານມັກຈະຫລຽວເຫັນເລື້ອຍໆໃນທຸກໆວັນ.*
- *ບອກໃຫ້ຄົນໃນຄອບຄົວຫຼືໝູ່ເພື່ອນຊ່ວຍເຕືອນທ່ານທຸກວັນ.*
- *ໝາຍໃສ່ໄວ້ໃນປະຕິທິນທຸກວັນຫຼັງຈາກທ່ານກິນຢາແລ້ວ.*
- *ໃຊ້ກ່ອງຢາຊະນິດທີ່ຂັ້ນເປັນຫ້ອງໝາຍໄວ້ໃນແຕ່ລະວັນ ເພື່ອຊ່ວຍເຕືອນບອກ.*
- *ກິນຢາໃນເວລາດຽວກັນທຸກໆວັນ. ຕົວຢ່າງ ຫຼັງຈາກຖູແຂ້ວ ກິນເຂົ້າເຊົ້າ, ຫຼືກ່ອນທີ່ທ່ານຈະເຂົ້ານອນ.*

*ຖ້າທ່ານລືມກິນມາຫຼາຍວັນ, ຈົ່ງບັນທຶກໄວ້ເພື່ອບອກໃຫ້ທ່ານໝໍຮູ້ຕອນທີ່ຈະໄປກວດນຳເພີ່ນໃນຄັ້ງຕໍ່ໄປນັ້ນ.*

ຄລີນິກ/ ທ່ານໝໍ/ ນາງພຍາບານຂອງທ່ານ:

______________________________

______________________________

______________________________

ໂທຣສັບ: _______________________

**ປ້ອງກັນທ່ານ, ຄອບຄົວ,**
**ເພື່ອນຝູງຈາກໂຣກປອດເຕົ້າງ –**
**ໃຫ້ກິນຢາປິ່ນປົວໂຣກປອດເຕົ້າງໃຫ້ຈົບຄົບຕາມກຳນົດ!**

MINNESOTA MDH DEPARTMENT OF HEALTH
Tuberculosis Prevention and Control Program
P.O. Box 64975
St. Paul, MN 55164-0975
651-201-5414
1-877-676-5414
www.health.state.mn.us/tb